## ບົດຮຽນ 19 - ຂ່າວປະເສີດເລື່ອງລາຊະອານາຈັກ

## ພຣະຄຳພີເດີມ ແລະ ພຣະຄຳພີໃໝ່

ເມື່ອພວກເຮົາອ່ານພຣະຄຳພີ, ຫຼາຍຄົນມັກຂີດເສັ້ນແບ່ງໃຫຍ່ໆ ລະຫວ່າງພຣະຄຳພີເດີມກັບພຣະຄຳພີໃຫມ່. ພວກເຮົາມັກຈະເຫັນຄົນສ່ວນໃຫຍ່ຖືພຣະຄຳພີໃຫມ່ເຫຼັ້ມນ້ອຍໆ ແທນທີ່ຈະເປັນພຣະຄຳພີໝົດທັງເຫຼັ້ມ (ເດີມແລະໃໝ່ຢູ່ນຳ). ໃນປະຈຸບັນນີ້ ມີຄຣິສຕຽນຫຼາຍຄົນທີ່ໄດ້ອ່ານແຕ່ພຣະຄຳພີໃຫມ່, ພວກເຂົາຖືວ່າ ພຣະຄຳພີເດີມບໍ່ສຳຄັນ. ແຕ່ທັດສະນະຄະຕິນີ້ບໍ່ໄດ້ສະທ້ອນເຖິງຄວາມເຂົ້າໃຈທີ່ຖືກຕ້ອງກ່ຽວກັບພຣະຄຳຂອງພຣະເຈົ້າ.

ຂໍ້ທຳອິດໃນພຣະຄຳພີໃຫມ່ຍັງກ່າວຄຳວ່າ "ນີ້ແມ່ນບັນດາລາຍຊື່ບັນດາພະບຸລຸດ ຂອງພຣະເຢຊູຄຣິດເຈົ້າ ເຊື້ອສາຍຄົນຫນຶ່ງຂອງດາວິດຜູ້ທີ່ສືບເຊື້ອສາຍມາຈາກອັບຣາຮາມ" (ມັດທາຍ 1:1). ພຣະເຢຊູຄຣິດຖືກນຳມາເປັນລູກຊາຍຂອງດາວິດ ແລະລູກຊາຍຂອງອັບຣາຮາມ. ເຈົ້າຈະຈື່ໄດ້ຈາກບົດຮຽນທີ່ຜ່ານມາ, ທີ່ພຣະເຈົ້າເຮັດພັນທະສັນຍາກັບອັບຣາຮາມ ແລະ ດາວິດໃນພຣະຄຳພີເດີມ. ເພາະສະນັ້ນ, ສິ່ງທີ່ຂຽນໃນພຣະທຳມັດທາຍແມ່ນໄດ້ເຊື່ອມຕໍ່ຢ່າງໃກ້ຊິດກັບພຣະສັນຍາເດີມ. ນັກຮຽນຜູ້ທີ່ບໍ່ສົນໃຈພຣະສັນຍາເດີມຈະບໍ່ເຂົ້າໃຈຄວາມສຳຄັນແມ່ນແຕ່ຂໍ້ທຳອິດໃນພຣະຄຳພີໃຫມ່.

ການເຊື່ອມຕໍ່ລະຫວ່າງພຣະຄຳພີໃຫມ່ ແລະ ພຣະຄຳພີເດີມແມ່ນຍັງເຫັນໄດ້ຢ່າງຊັດເຈນອີກຢູ່ໃນບົດທຳອິດຂອງຫນັງສືຂ່າວປະເສີດຂອງລູກາ. "ເຈົ້າຈະຕັ້ງທ້ອງ ແລະເກີດລູກຊາຍຜູ້ຫນຶ່ງ ແລະເຈົ້າຈົ່ງໃສ່ຊື່ໃຫ້ກຸມມານນັ້ນວ່າ ເຢຊູ. 32ກຸມມານນັ້ນຈະເປັນໃຫຍ່ ແລະຈະເປັນທີ່ເອີ້ນວ່າ ບຸດຂອງພຣະເຈົ້າອົງສູງສຸດ ອົງພຣະຜູ້ເປັນເຈົ້າພຣະເຈົ້າຈະໃຫ້ເພິ່ນນັ່ງບັນລັງຂອງກະສັດດາວິດ ຜູ້ເປັນບັນພະບຸລຸດຂອງເພິ່ນ 33ແລະ ເພິ່ນຈະປົກຄອງເຊື້ອສາຍຂອງຢາໂຄບຕະຫລອດໄປ ແລະອານາຈັກຂອງເພິ່ນຈະບໍ່ສິ້ນສຸດເປັນຈັກເທື່ອ" (ລູກາ 1:31-33). ເມື່ອລູກາຂຽນກ່ຽວກັບການເກີດຂອງພຣະຄຣິດ, ລາວເວົ້າວ່າ ພຣະຜູ້ເປັນເຈົ້າຈະນັ່ງຢູ່ເທິງບັນລັງຂອງດາວິດ ຈະປົກຄອງອານາຈັກຕະຫຼອດໄປ.

ນີ້ແມ່ນອານາຈັກທີ່ຊົງສັນຍາໄວ້ໃນພຣະຄຳພີເດີມຢ່າງແນ່ນອນ. ພວກເຮົາຈະເລີ່ມການສຶກສາຂອງພຣະຄຳພີໃຫມ່ໂດຍການພິຈາລະນາໃສ່ພຣະທຳມັດທາຍ, ມາຣະໂກ, ລູກາ, ແລະ ໂຢຮັນ ໃນບົດຮຽນນີ້. ດັ່ງທີ່ພວກເຮົາໄດ້ເຫັນແລ້ວ, ພຣະທຳເຫຼົ່ານີ້ຕ້ອງໄດ້ອ່ານໂດຍຄຳນຶງໃສ່ສິ່ງທີ່ພວກເຮົາໄດ້ສຶກສາກ່ຽວກັບພຣະຄຳພີເດີມ. ຕົວຢ່າງ, ຜູ້ເຊື່ອໃນພຣະເຈົ້າສ່ວນໃຫຍ່, ເມື່ອອ່ານພົບຄຳວ່າ "ຄວາມລອດພົ້ນ" ພວກເຂົາມັກຈະຄິດເຖິງການຂຶ້ນສະຫວັນອັນເປັນນິລັນດອນ. ແຕ່ໃຫ້ສັງເກດເບິ່ງສິ່ງທີ່ລູກາຂຽນວ່າ: "ຈົ່ງສັນລະເສີນອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງອິດສະຣາເອນ; ດ້ວຍວ່າພຣະອົງໄດ້ຊົງຢ້ຽມຢຽມ ແລະ ໄດ້ຊົງໄຖ່ເອົາພົນລະເມືອງຂອງພຣະອົງ, ແລະໄດ້ໃຫ້ຜູ້ຊົງຣິດຜູ້ຫນຶ່ງເກີດຂຶ້ນໃນເຊື້ອວົງຂອງດາວິດ ຜູ້ຮັບໃຊ້ຂອງພຣະອົງ ເພື່ອເປັນຜູ້ຊົງໂຜດໃຫ້ພົ້ນຂອງພວກເຮົາ; ຕາມທີ່ພຣະອົງໄດ້ຊົງກ່າວໄວ້ຕັ້ງແຕ່ສະໄໝບູຮານໂດຍປາກຜູ້ທຳນວາຍບໍລິສຸດຂອງພຣະອົງ, ຄືຊົງໂຜດໃຫ້ພົ້ນຈາກສັດຕູທັງຫຼາຍຂອງພວກເຮົາ ແລະ ພົ້ນຈາກມືຄົນທັງປວງທີ່ກຽດຊັງເຮົາ; ດັ່ງນັ້ນ ຈຶ່ງຊົງສຳແດງພຣະກະລຸນາ ຊຶ່ງຊົງສັນຍາແກ່ບັນພະບຸລຸດຂອງພວກເຮົາ ແລະຊົງນຶກເຖິງພັນທະສັນຍາອັນບໍລິສຸດຂອງພຣະອົງ; ຄືຄຳສາບານ ຊຶ່ງພຣະອົງໄດ້ຊົງສາບານໄວ້ກັບອັບຣາຮາມ ບັນພະບຸລຸດຂອງພວກເຮົາ" (ລູກາ 1:68-73). ມີຫຼາຍສິ່ງທີ່ຄວນສັງເກດໃນຂໍ້ນີ້ເຊັ່ນ:

ກ) ພຣະເຈົ້າໄດ້ຖືກກ່າວວ່າເປັນ "ພຣະເຈົ້າຂອງອິດສະຣາເອນ";

ຂ) ຊາວອິດສະຣາເອນແມ່ນ "ປະຊາຊົນຂອງພຣະເຈົ້າ";

ຄ) "ຄວາມລອດພົ້ນ" ໃນຂໍ້ນີ້ແມ່ນອິດສະຣາເອນໄດ້ຮັບຄວາມລອດພົ້ນຈາກສັດຕູຂອງພວກເຂົາ;

ງ) ລູກາກຳລັງຂຽນກ່ຽວກັບການສຳເລັດຜົນຂອງພັນທະສັນຍາທີ່ພຣະເຈົ້າໄດ້ໃຫ້ໄວ້ກັບອັບຣາຮາມ.

ພວກເຮົາກຳລັງເນັ້ນຫນັກໃສ່ການເຊື່ອມຕໍ່ລະຫວ່າງພຣະຄຳພີເດີມ ແລະ ຫນັງສືສີ່ເຫຼັ້ມທຳອິດຂອງພຣະຄຳພີໃຫມ່ ເນື່ອງຈາກວ່າຊາວຄຣິສຕຽນຈຳນວນຫຼາຍໄປອ່ານພຣະຄຳພີໃຫມ່ເຫືອນກັບວ່າບໍ່ມີພຣະຄຳພີເດີມແລ້ວ. ການເຂົ້າໃຈພຣະຄຳພີເດີມຈາກການສຶກສາໃນບົດຮຽນ 17 ແລະ 18, ເຮົາພ້ອມທີ່ຈະຮຽນມັດທາຍ, ມາລະໂກ ລູກາ ແລະ ໂຢຮັນແລ້ວ.

<u>ອານາຈັກທີ່ຈະ "ມາເຖິງ"</u>

ໃນພຣະຄຳພີເດີມ, ພຣະເຈົ້າໄດ້ສັນຍາວ່າຈະມອບອານາຈັກໃຫ້ແກ່ຊາດອິດສະຣາເອນ. ແຕ່ພຣະເຈົ້າບໍ່ໄດ້ບອກພວກເຂົາວ່າອານາຈັກນີ້ຈະມາເມື່ອໃດ. ໃນພຣະທຳມັດທາຍ, ພຣະເຈົ້າຊົງເວົ້າເພີ່ມເຕີມກ່ຽວກັບອານາຈັກທີ່ຊົງສັນຍາໄວ້. ໂຢຮັນ ບັບຕິສະໂຕ ປະກາດວ່າ "ພຣະອົງໄດ້ກ່າວວ່າ, ຈົ່ງຖິ້ມໃຈເກົ່າແລ້ວເອົາໃຈໃຫມ່, ເພາະວ່າ ອານາຈັກສະຫວັນໃກ້ມາແລ້ວ" (ມັດທາຍ 3:2). ອານາຈັກທີ່ຊົງສັນຍາໄວ້ໃນປັດຈຸບັນໄດ້ຖືກປະກາດວ່າ "ຈະມາເຖິງແລ້ວ" ຫຼື ຢູ່ໃກ້ໆ. [ເບິ່ງມັດທາຍ 4:17 ແລະ 10:7] ອັນນີ້ເປັນຍ້ອນການປະສູດມາຂອງກະສັດແນ່ນອນ.

ຮູບ

ທີ່ມາ: https://filedn.com/lD0GfuMvTstXgqaJfpLL87S/sweet_images/jpg/40/40_Mt_03_02_RG.jpg -

ໃຊ້ສຳລັບເປັນຕົວຢ່າງການເທດສະຫນາຂອງໂຢຮັນ ບັບຕິສະໂຕເທົ່ານັ້ນ.

## ພຣະບັນຍັດ

ພວກເຮົາເຫັນແລ້ວວ່າ ຊາດອິດສະຣາເອນໄດ້ອາໃສຢູ່ພາຍໃຕ້ກົດບັນຍັດຂອງໂມເຊ. ໃນຍຸກຂອງພຣະຄໍາພີເດີມ ພວກເຂົາຕ້ອງຖວາຍສັດເປັນເຄື່ອງບູຊາ, ຖືຮັກສາເທດສະການຕ່າງໆ, ເຮັດພິທີຕັດໃຫ້ຜູ້ຊາຍທັງຫມົດ, ຮັກສາວັນສະບາໂຕ ແລະ ອື່ນໆ. ພຣະບັນຍັດຍັງມີຜົນອີກບໍໃນພຣະທໍາມັດທາຍ, ມາຣະໂກ, ລູກາ ແລະ ໂຢຮັນ? ພຣະທໍາເຫຼົ່ານີ້ກົງກັບໂຣມ 6:14 ທີ່ບອກວ່າ: "ພວກເຈົ້າບໍ່ຢູ່ໃຕ້ກົດບັນຍັດ ແຕ່ວ່າພວກເຈົ້າຢູ່ພາຍໃຕ້ພຣະຄຸນຂອງພຣະເຈົ້າ" ຫຼືບໍ່?

ການຊອກຫາຄໍາຕອບສໍາລັບຄໍາຖາມນີ້ແມ່ນງ່າຍຫຼາຍ, ເພາະພວກເຮົາມີຂໍ້ຄວາມທີ່ບອກວ່າ: "ຢ່າຄຶດວ່າເຮົາມາເພື່ອລຶບລ້າງກົດບັນຍັດ ຫລືຜູ້ທໍານວາຍ: ເຮົາບໍ່ໄດ້ມາລຶບລ້າງ ແຕ່ມາເຮັດໃຫ້ສໍາເລັດຄົບຖ້ວນ. ເຮົາບອກພວກເຈົ້າຕາມຄວາມຈິງວ່າຕາບໃດທີ່ຟ້າ ແລະດິນຍັງຕັ້ງຢູ່ ແມ່ນແຕ່ເມັດ ຫລືຂີດນ້ອຍອັນເລັກນ້ອຍທີ່ສຸດຂອງກົດບັນຍັດຈະບໍ່ຖືກລຶບໄປ, ຈົນກ່າວທຸກສິ່ງຈະເກີດຂຶ້ນຄົບຖ້ວນ" (ມັດທາຍ 5:17-18). ດັ່ງນັ້ນ ພຣະເຢຊູຄຣິດຈຶ່ງປະກາດຢ່າງຈະແຈ້ງວ່າ ກົດບັນຍັດຍັງຈະຕ້ອງຖືກປະຕິບັດຢູ່ໃນອິດສະຣາເອນ. ໃນມັດທາຍ 5:23-24, ພຣະຄຣິດເວົ້າກ່ຽວກັບຄົນທີ່ນໍາເອົາເຄື່ອງບູຊາມາ "ວາງເຄື່ອງຖວາຍເທິງແທ່ນບູຊາ." ຂໍ້ພຣະຄໍາພີເຫຼົ່ານີ້ມັກຈະຕີຄວາມໝາຍວ່າ ເປັນການສອນໃຫ້ຄຣິສຕຽນຢຸດການອະທິຖານ ຫຼື ການນະມັດສະການທັນທີ ແລະ ໄປຄືນດີກັບອ້າຍຂອງຕົນກ່ອນ ຖ້າຫາກວ່າມີຂໍ້ຂັດແຍ່ງກັນ. ເມື່ອໃດຂໍ້ຂັດແຍ່ງໄດ້ຖືກແກ້ໄຂ, ຈຶ່ງສາມາດສືບຕໍ່ການອະທິຖານ ຫຼື ການນະມັດສະການໄດ້. ແຕ່ຂໍ້ພຣະຄໍາພີເຫຼົ່ານີ້ບໍ່ໄດ້ເວົ້າກ່ຽວກັບການຂັດຂວາງການອະທິຖານ ຫຼື ການນະມັດສະການຂອງທ່ານ. ຂໍ້ທີ 25 ກ່າວວ່າ "ຈົ່ງເອົາເຄື່ອງຖວາຍຂອງເຈົ້າໄວ້ຕໍ່ໜ້າແທ່ນບູຊາ." ເຄື່ອງຖວາຍທີ່ກ່າວເຖິງໃນຂໍ້ພຣະຄໍາພີເຫຼົ່ານີ້ຫມາຍເຖິງ ການນໍາເອົາເຄື່ອງບູຊາໃນພຣະຄໍາພີເດີມໄປສູ່ແທ່ນບູຊາ. ຄໍາສັ່ງຂອງພຣະເຢຊູຄຣິດ ບໍ່ພຽງແຕ່ໃຫ້ຄືນດີກັບພີ່ນ້ອງທີ່ຂັດແຍ່ງກັນເທົ່ານັ້ນ, ແຕ່ຍັງໃຫ້ "ກັບຄືນມາຖວາຍເຄື່ອງບູຊາຂອງເຈົ້າ" ດ້ວຍ (ຂໍ້ທີ 25).

ໃນມັດທາຍບົດທີແປດ, ພຣະເຢຊູຄຣິດໄດ້ປິ່ນປົວຄົນຂີ້ທູດຄົນໜຶ່ງ "ແລ້ວພຣະເຢຊູຄຣິດເຈົ້າກໍຊົງກ່າວແກ່ລາວວ່າ, ຈົ່ງຟັງໃຫ້ດີ ຢ່າເວົ້າເລື່ອງນີ້ສູ່ຜູ້ໃດຟັງ ແຕ່ຈົ່ງໄປຫາປະໂຣຫິດເພື່ອໃຫ້ເພິ່ນກວດເບິ່ງເຈົ້າ ແລະຈົ່ງຖວາຍເຄື່ອງບູຊາຕາມທີ່ໂມເຊໄດ້ສັ່ງໄວ້ ເພື່ອເປັນຫຼັກຖານໃຫ້ພວກເຂົາ" (ມັດທາຍ 8:4). ຄົນທີ່ເປັນພະຍາດຂີ້ທູດຖືກແນະນໍາໃຫ້ເຊື່ອຟັງຄໍາສັ່ງຂອງໂມເຊທີ່ບັນທຶກໄວ້ໃນພຣະຄໍາພີເດີມ. ເມື່ອພຣະເຢຊູຄຣິດສະຖິດຢູ່ໃນໂລກ, ພຣະອົງໄດ້ສອນຊາວອິດສະຣາເອນຢ່າງສະໝໍ່າສະເໝີໃຫ້ເຊື່ອຟັງກົດບັນຍັດຂອງໂມເຊ. ມັດທາຍ 23:1-3 ເປັນການບັນທຶກຂອງພຣະຜູ້ເປັນເຈົ້າທີ່ສັ່ງສອນສາວົກຂອງພຣະອົງໃຫ້ "ສັງເກດ ແລະ ເຮັດ" ທຸກສິ່ງທີ່ຂຽນໄວ້ໃນກົດບັນຍັດຂອງໂມເຊ (ພວກຟາຣີຊາຍເປັນຄົນໜ້າຊື່ໃຈຄົດ ເພາະວ່າພວກເຂົາສອນຄົນອື່ນໃຫ້ເຊື່ອຟັງກົດບັນຍັດ, ແຕ່ບໍ່ໄດ້ເຮັດຕາມກົດບັນຍັດ.) ພຣະເຢຊູຄຣິດບໍ່ໄດ້ສອນພວກສາວົກຂອງພຣະອົງວ່າ "ພວກເຈົ້າບໍ່ຢູ່ພາຍໃຕ້ພຣະບັນຍັດ, ແຕ່ຢູ່ພາຍໃຕ້ພຣະຄຸນ." ແຕ່ພຣະອົງສອນພວກເຂົາໃຫ້ເຊື່ອຟັງພຣະບັນຍັດຢ່າງເຂັ້ມງວດໃນທຸກໆດ້ານ.

## ອານາຈັກເທິງແຜ່ນດິນໂລກ

ພວກເຮົາໄດ້ເຫັນວ່າ ຜູ້ທີ່ເຊື່ອໃນພຣະຄຳພີເດີມບໍ່ໄດ້ຮັບພຣະສັນຍາເລື່ອງບ້ານອັນນິລັນດອນໃນສະຫວັນ. ແທນທີ່ຈະເປັນພວກເຂົາທີ່ໄດ້ຮັບພຣະສັນຍາເລື່ອງອານາຈັກອັນນິລັນດອນໃນໂລກ. ໃນພຣະທຳມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນ ຜູ້ທີ່ເຊື່ອໃນພຣະເຈົ້າໄດ້ຮັບພຣະສັນຍາເລື່ອງບ້ານໃນສະຫວັນບໍ? ຫຼືອານາຈັກເທິງແຜ່ນດິນໂລກບໍ? "ຜູ້ໃດມີໃຈອ່ອນຫວານກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ຮັບແຜ່ນດິນໂລກເປັນມໍລະດົກ" (ມັດທາຍ 5:5). ພວກສາວົກບໍ່ໄດ້ຮັບພຣະສັນຍາເລື່ອງມໍລະດົກໃນສະຫວັນ, ແຕ່ຢູ່ເທິງແຜ່ນດິນໂລກ. ພວກເຂົາຖືກສອນໃຫ້ອະທິຖານວ່າ: "ຂໍໃຫ້ພຣະຣາຊາອານາຈັກຂອງພຣະອົງມາຕັ້ງຢູ່ ຂໍໃຫ້ເປັນໄປຕາມນ້ຳພຣະໄທຂອງພຣະອົງໃນສະຫວັນຢ່າງໃດ ຂໍໃຫ້ເປັນໄປຢ່າງນັ້ນທີ່ແຜ່ນດິນໂລກ" (ມັດທາຍ 6: 10). ພວກເຂົາຊອກສະແຫວງຫາລາຊະອານາຈັກຂອງພຣະເຈົ້າທີ່ຈະມາເຖິງໂລກ. ພວກເຮົາໄດ້ອ້າງອີງແລ້ວຈາກພຣະທຳລູກາ 1:31-33 ວ່າ ພຣະເຢຊູຄຣິດຈະນັ່ງເທິງ "ບັນລັງຂອງກະສັດດາວິດ ຜູ້ເປັນບັນພະບູລຸດຂອງເພິ່ນ." ບັນລັງຂອງດາວິດທີ່ຢູ່ເທິງແຜ່ນດິນໂລກ.

ບາງຄົນໄດ້ພະຍາຍາມທີ່ຈະປະຕິເສດຄຳສອນທີ່ຈັດເຈນທີ່ກ່າວມາຂ້າງເທິງນີ້ ໂດຍຊີ້ໃຫ້ເຫັນວ່າ ມັດທາຍຂຽນກ່ຽວກັບ "ລາຊະອານາຈັກແຫ່ງສະຫວັນ" (ມັດທາຍ 3:2, 4:17, 10:7). ພວກເຂົາກ່າວວ່າ ເລື່ອງນີ້ສອນວ່າ ພວກສາວົກຈະຢູ່ໃນອານາຈັກສະຫວັນ. ຄວນສັງເກດຂໍ້ຕໍ່ໄປນີ້ຢ່າງລະອຽດ:

ກ) ການຕີຄວາມໝາຍນີ້ຈະຂັດກັບມັດທາຍ 5:5; ມັດທາຍ 6:10; ລູກາ 1:31-33; ແລະ ອື່ນໆ. ພຣະຄຳເຫຼົ່ານີ້ກ່າວເຖິງອານາຈັກເທິງແຜ່ນດິນໂລກ.

ຂ) ປະໂຫຍກໃນພຣະທຳມັດທາຍບໍ່ແມ່ນ "ອານາຈັກໃນສະຫວັນ," ແຕ່ "ອານາຈັກຂອງສະຫວັນ."

ຄ) ດານີເອນ 2:44 ສັນຍາວ່າ "ພຣະເຈົ້າແຫ່ງສະຫວັນ" ຈະສ້າງຕັ້ງອານາຈັກອັນເປັນນິດເທິງແຜ່ນດິນໂລກ. ອານາຈັກນີ້ຖືກສ້າງຕັ້ງຂຶ້ນໂດຍພຣະເຈົ້າແຫ່ງສະຫວັນ. ດັ່ງນັ້ນ ຈຶ່ງຖືກເອີ້ນວ່າ "ອານາຈັກຂອງພຣະເຈົ້າ" (ມາຣະໂກ 1:14-15). ມັນໄດ້ຖືກສ້າງຕັ້ງຂຶ້ນໂດຍພຣະເຈົ້າແຫ່ງສະຫວັນ ແລະ ເພາະສະນັ້ນ ຈຶ່ງຖືກເອີ້ນວ່າ "ອານາຈັກສະຫວັນ" (ມັດທາຍ 3:2). ທັງສອງຂໍ້ນີ້ຫມາຍເຖິງອານາຈັກຂອງໂລກດຽວກັນທີ່ສັນຍາໄວ້ໃນພຣະຄຳພີເດີມ.

ງ) ທີ່ຕັ້ງຂອງອານາຈັກແມ່ນສະຫວັນ. ລາຊະອານາຈັກນີ້ຈະມາຈາກສະຫວັນສູ່ໂລກ. ອານາຈັກນີ້ຈະເປັນ "ສະຫວັນເທິງແຜ່ນດິນໂລກ" (ເບິ່ງພຣະບັນຍັດສອງ 11:21).

ພຣະທຳມັດທາຍ, ມາລະໂກ, ລູກາ ແລະ ໂຢຮັນບໍ່ໄດ້ສັນຍາກັບຜູ້ເຊື່ອທີ່ເຊື່ອໃນພຣະເຈົ້າວ່າ ພວກເຂົາຈະໄປສະຫວັນ. ພວກສາວົກໄດ້ຮັບພຣະສັນຍາເລື່ອງອານາຈັກເທິງແຜ່ນດິນໂລກ.

<u>ຄຳຖາມທວນຄືນ ບົດຮຽນ 19 - ຂ່າວປະເສີດເລື່ອງລາຊະອານາຈັກ</u>

<u>ຖືກ ຫຼື ຜິດ</u>

1. ພຣະຄຳພີເດີມ ແລະ ພຣະຄຳພີໃຫມ່ແມ່ນແຍກກັນ ແລະ ບໍ່ກ່ຽວຂ້ອງກັນເລີຍ.
2. ບຸກຄົນທີ່ບໍ່ມີຄວາມຮູ້ກ່ຽວກັບພຣະຄຳພີເດີມຍັງສາມາດເຂົ້າໃຈໜັງສືຂ່າວປະເສີດຂອງລູກາໄດ້.
3. ພຣະຄຳພີເດີມໄດ້ສັນຍາເຖິງອານາຈັກຫນຶ່ງ, ແຕ່ບໍ່ໄດ້ບອກວ່າ ອານາຈັກນີ້ຈະມາເຖິງເມື່ອໃດ.

4. ພຣະເຢຊູຄຣິດມາເພື່ອທຳລາຍພຣະບັນຍັດ.

<u>ຄຳຖາມແບບປາລະໄນ</u>

5. ຜູ້ທີ່ເຊື່ອໃນຍຸກພຣະຄຳພີເດີມ:

ກ) ໄດ້ຮັບພຣະສັນຍາເຖິງບ້ານທີ່ຢູ່ໃນສະຫວັນ

ຂ) ດຳລົງຊີວິດຢູ່ພາຍໃຕ້ພຣະຄຸນ, ບໍ່ແມ່ນກົດບັນຍັດ

ຄ) ໄດ້ຮັບພຣະສັນຍາເລື່ອງອານາຈັກໃນໂລກນີ້

ງ) ບໍ່ໄດ້ຖວາຍສັດເປັນເຄື່ອງບູຊາ

6. ພຣະທຳມັດທາຍມີປະໂຫຍກຕໍ່ໄປນີ້:

ກ) ອານາຈັກສະຫວັນ

ຂ) ອານາຈັກຢູ່ໃນສະຫວັນ

ຄ) ອານາຈັກແມ່ນສະຫວັນ

ງ) ອານາຈັກ ແລະ ສະຫວັນ

7. ອີງຕາມມັດທາຍ 1:1, ພຣະເຢຊູຄຣິດແມ່ນ:

ກ) ຜູ້ທີ່ມາທຳລາຍກົດບັນຍັດ

ຂ) ບຸດຂອງອາດາມ ແລະ ອັບຣາຮາມ

ຄ) ບຸດຂອງໂມເຊ ແລະ ດາວິດ

ງ) ບຸດຂອງອັບຣາຮາມ ແລະ ດາວິດ

<u>ຕື່ມໃສ່ຊ່ອງຫວ່າງ</u>

8. ໜັງສືສີ່ເຫຼັ້ມທຳອິດໃນພຣະຄຳພີໃໝ່ແມ່ນ______________,____________,___________ ແລະ______________.

9. ຜູ້ທີ່ເຊື່ອໃນພຣະຄຳພີເດີມໄດ້ດຳລົງຊີວິດພາຍໃຕ້________________.

10. ໃນມັດທາຍ 8:4, ພຣະເຢຊູຄຣິດໄດ້ສັ່ງຄົນຂີ້ທູດໃຫ້ໄປຖວາຍເຄື່ອງບູຊາ.